ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 1440 /ທຄຕລ 2025
ນະຄອນຫຼວງວຽງຈັນ, ວັນທີ: 13 MAY 2025

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍ ໃນນະຄອນຫຼວງວຽງຈັນ.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາບຳລຸງຮັກສາ ຈັກກວດນັບລັດໄຈ້ເງິນ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍ, ເພື່ອເຂົ້າຮ່ວມປະມູນລາຄາໃນການບໍລິການ ບຳລຸງຮັກສາ ຈັກກວດນັບລັດໄຈ້ເງິນ ຂອງ ທຄຕລ ເພື່ອຮັບປະກັນການໃຊ້ງານອຸປະກອນເຄື່ອງຈັກໃຫ້ມີປະສິດທິພາບ, ດັ່ງມີລາຍລະອຽດເຄື່ອງຈັກຂ້າງລຸ່ມນີ້:

| ລ/ດ | ລາຍການ | ຈຳນວນ (ເຄື່ອງ) | ໝາຍເຫດ |
|---|---|---|---|
| 1 | GLORY GFS-120 | 200 | ລາຍລະອຽດທີ່ຕັ້ງ ແມ່ນລັດຕິດດ້ານຫຼັງ |
| 2 | GLORY GFS-220 | 9 | |
| 3 | GLORY UW-500 | 2 | |
| 4 | GLORY UW-600 | 5 | |
| 5 | GLORY UFS-100 | 1 | |
| 6 | Glory UW F4 | 3 | |
| 7 | KISAN K5 | 1 | |
| 8 | KISAN K3 | 1 | |
| | **ລວມທັງໝົດ** | **222** | |

**ໝາຍເຫດ:** ບໍລິສັດສາມາດເຂົ້າມາສຳຫຼວດ ແລະ ສອບຖາມຂໍ້ມູນໄດ້ ນັບຕັ້ງແຕ່ ມື້ນີ້ ເຖິງ 22/05/2025 ໃນໂມງລັດຖະການ.

**ໜ້າທີ່ຂອງຜູ້ໃຫ້ບໍລິການໃນການບຳລຸງຮັກສາ ຈັກກວດນັບລັດໄຈ້ເງິນ ມີດັ່ງນີ້:**

1) ກວດເຊັກພື້ນຖານຂອງເຄື່ອງ ເຊັ່ນ: ການຕັ້ງຄ່າຂອງເຄື່ອງ ແລະ ອື່ນໆ ຕາມມາດຕະຖານເຕັກນິກ.
2) ບັນທຶກລາຍລະອຽດຕ່າງໆທີ່ຕິດພັນກັບຕົວເຄື່ອງ.
3) ບຳລຸງຮັກສາອະນາໄມພາຍໃນ ແລະ ພາຍນອກຕົວເຄື່ອງ.
4) ບຳລຸງຮັກສາ: 3 ເດືອນ/ຄັ້ງ (4 ຄັ້ງ/ປີ).
5) ສະຫຼຸບລາຍງານໃຫ້ ທຄຕລ ໃນການບຳລຸງຮັກສາແຕ່ລະຄັ້ງ.
6) ໜ້າວຽກອື່ນໆທີ່ຈຳເປັນໃນການບຳລຸງຮັກສາເຄື່ອງ (ໃຫ້ບໍລິສັດລະບຸມາຕື່ມ).
7) ຖ້າເກີດມີບັນຫາໃນຊ່ວງໄລຍະການບຳລຸງຮັກສາ ທີ່ມາຈາກການກວດສອບທີ່ບໍ່ຄົບຖ້ວນ ບໍ່ຮອບຄອບຂອງບໍລິສັດ ມີການປ່ອຍປະລະເລີຍ ຫຼື ແກ່ຍາວໃນການແກ້ໄຂບັນຫາ ທຄຕລ ມີສິດປັບໄໝໂດຍຄິດໄລ່ຈາກຄວາມເສຍຫາຍຕົວຈິງ.

Tel: 213200 ຕໍ່ 414, 020 23344556, 02055334674

- **ເງື່ອນໄຂຂອງບໍລິສັດທີ່ມີຄວາມຕ້ອງການເຂົ້າຮ່ວມຍື່ນຊອງປະມູນລາຄາ ຕ້ອງປະກອບເອກະສານໃຫ້ຄົບຖ້ວນດັ່ງລຸ່ມນີ້:**

- **ເອກະສານ ຊອງທີ 1:**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນ ກວດນັບຄັດໄຈ້ເງິນ ຢ່າງໜ້ອຍ 03 ປີຂຶ້ນໄປ: ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນ 3 ປີ (ປີ 2021, 2022, 2023).
2. ໃບຢັ້ງຢືນການເປັນຕົວແທນຈຳໜ່າຍຈາກບໍລິສັດຈຳໜ່າຍຈັກຍີ່ຫໍ້ Glory ທີ່ຍັງບໍ່ໝົດອາຍຸ (ຖ້າມີ).
3. ເອກະສານລາຍລະອຽດສະເປັກໜ້າວຽກ, ການຮັບປະກັນ ແລະ ຂໍ້ມູນຕ່າງໆຕາມ Format ທີ່ຕິດຄັດມາພ້ອມນີ້.
4. ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ ວັນພະຫັດ, **ທີ 22/05/2025 ເວລາ 11:00 ໂມງ** ໂດຍການສົ່ງຝາຍເຂົ້າ E-mail: procurement@bcel.com.la ແລະ inspect-it@bcel.com.la

- **ເອກະສານ ຊອງທີ 2: (ປິດຊອງ)**

1. ໃບສະເໜີລາຄາຕ້ອງເປັນສະກຸນເງິນກີບ ແລະ ລວມອາກອນມູນຄ່າເພີ່ມ 10% ແລະ ແຍກລາຄາບຳລຸງຮັກສາເຄື່ອງຈັກແຕ່ລະລຸ້ນໃຫ້ລະອຽດ. ການສະເໜີລາຄາແມ່ນໃຫ້ສະເໜີເປັນ 2 ຮູບແບບຄື: 1. ແບບລວມອາໄຫຼ່, 2. ແບບບໍ່ລວມອາໄຫຼ່.
2. ຜູ້ສະໜອງຕ້ອງວາງເງິນຄໍ້າປະກັນການປະມູນຕໍ່າສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄໍ້າປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄໍ້າປະກັນຕ້ອງເຖິງ ວັນທີ 30/08/2025)** ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄໍ້າປະກັນດັ່ງກ່າວຄືນໃຫ້ຜູ້ບໍ່ໄດ້ຮັບການຄັດເລືອກພາຍໃນ 20 ວັນ.
3. ວັນອັງຄານ, **ທີ 10/06/2025 ເວລາ 09:00 ໂມງ** ແມ່ນມື້ເປີດຊອງລາຄາ, ສະນັ້ນ ໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5 ອາຄານ C.

- **ໝາຍເຫດ:** ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ, ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

- **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

  - ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ 01 ປີ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
  - ຖ້າຜູ້ຊະນະການປະມູນ ປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.

- **ການຊຳລະແມ່ນແບ່ງອອກເປັນ 04 ງວດ/ປີ ດັ່ງລຸ່ມນີ້:**

  - **ງວດທີ 1**: ຊຳລະ 25% ຂອງມູນຄ່າ ພາຍໃນ 30 ວັນ ພາຍຫຼັງທີ່ເຂົ້າມາບຳລຸງຮັກສາ ງວດທີ 1 ແລະ ກວດກາຄວາມຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ.
  - **ງວດທີ 2**: ຊຳລະ 25% ຂອງມູນຄ່າ ພາຍໃນ 30 ວັນ ພາຍຫຼັງທີ່ເຂົ້າມາບຳລຸງຮັກສາ ງວດທີ 2 ແລະ ກວດກາຄວາມຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ.

- **ງວດທີ 3**: ຊຳລະ 25% ຂອງມູນຄ່າ ພາຍໃນ 30 ວັນ ພາຍຫຼັງທີ່ເຂົ້າມາບຳລຸງຮັກສາ ງວດທີ 3 ແລະ ກວດກາຄວາມຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ.
- **ງວດທີ 4:** ຊຳລະ 25% ຂອງມູນຄ່າ ພາຍໃນ 30 ວັນ ພາຍຫຼັງທີ່ເຂົ້າມາບຳລຸງຮັກສາ ງວດທີ 4 ແລະ ກວດກາຄວາມຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

ຮກ. **ຜູ້ອຳນວຍການ**

ທະນາຄານ ແຫ່ງ ສປປ ລາວ ນະຄອນ ວຽງຈັນ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ຫລວງ

**ນ. ບົວໄພວັນ ນັນດາວົງ**

Tel: 213200 ຕໍ່ 414, 020 23344556, 02055334674

| ລ/ດ | ສາຂາ | UW 600 | UW 500 | GFS 100 | UW F4 | Kisan K5 | GFS 120 | GFS 220 | Kisan K3 |
|---|---|---|---|---|---|---|---|---|---|
| 1 | ດົງໂດກ | | | | | | 27 | | |
| 2 | ບໍລິຄຳໄຊ | | | | | | 6 | | 1 |
| 3 | ຄຳມ່ວນ | | | | | | 7 | 2 | |
| 4 | ສະຫວັນນະເຂດ | 1 | 1 | | | | 3 | | |
| 5 | ຈຳປາສັກ | 1 | 1 | | | | 14 | | |
| 6 | ເຊກອງ | | | | 1 | | 7 | | |
| 7 | ສາລະວັນ | | | | | | 4 | | |
| 8 | ອັດຕະປື | | | | 1 | | 3 | | |
| 9 | ນະຄອນຫຼວງ | | | | | | ບໍ່ບຳລຸງຮັກສາ | | |
| 10 | ໄຊເສດຖາ | | | | | | 31 | | |
| 11 | ໂພນໂຮງ | | | | | | 13 | | |
| 12 | ວັງວຽງ | | | | 1 | | 3 | | |
| 13 | ຫຼວງພະບາງ | 1 | | | | | 10 | | |
| 14 | ຫຼວງນ້ຳທາ | | | | | | 16 | | |
| 15 | ໄຊຍະບູລີ | 1 | | | | | 3 | 3 | |
| 16 | ຊຽງຂວາງ | | | | | | 6 | 3 | |
| 17 | ຫົວພັນ | | | | | | 6 | | |
| 18 | ອຸດົມໄຊ | | | | | | 6 | | |
| 19 | ບໍ່ແກ້ວ | | | | | 1 | 9 | 1 | |
| 20 | ຜົ້ງສາລີ | | | | | | 6 | | |
| 21 | ສຳນັກງານໃຫ່ຍ | 1 | | 1 | | | 20 | | |
| | ລວມ | 5 | 2 | 1 | 3 | 1 | 200 | 9 | 1 |

222

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ ......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | ໝາຍເຫດ |
|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານ MA ກ່ຽວກັບ ຈັກກວດນັບຄັດໄຈ້ເງິນ | ໜ້າວຽກ | |
| 1 | ບ/ສ......... | (ເລກທີ/ 02.01.2015) | (ເລກທີ/ 02.01.2015) | (ເລກທີ/ 02.01.2015) | .... ປີ | (ໃຫ້ລະບຸ) | | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ............................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ: